## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 1 ມະກະຣາ 2023 (01-01-2023)

---

## ຈົ່ງກ້າຫານໃນບ່ອນມີຄວາມຢ້ານ

*ກິຈກັມພະຈົນພັຍທີ່ສຸດອັນໃດທີ່ທ່ານເລືອກທຳເພື່ອຄວາມມ່ວນຊື່ນ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງຕິດຕາມພຣະເຢຊູຢ່າງກ້າຫານ, ແມ້ແຕ່ໃນສະຖານະການໜ້າຢ້ານຕ່າງໆ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອຫຼາຍປີຜ່ານມາ, ຂ້າພະເຈົ້າໄດ້ອົບຮົມນັກຮຽນພວກນຶ່ງ ໃນດ້ານລັກສນະການສ້າງ-ທີມງານ. ພາກປະຕິບັດອັນນຶ່ງມີການຢືນເທິງຍອດຫຼັກເສົາສູງສາມສິບຟຸດ ແລະໂຕນລົງຈັບຮາວໂອນໄປ. ແນ່ນອນ, ພວກເຮົາໃສ່ສາຍທັດຕິດກັບເຊືອກຍ່ອນ, ແຕ່ກໍ່ຍັງມີຄວາມຢ້ານຫຼາຍເຕີບຜ່ານເຂົ້າມາໃນຫົວເມື່ອເຮົາຢືນຢູ່ເທິງຍອດເສົາສູງສາມສິບຟຸດກາງອາກາດ. ຂ້າພະເຈົ້າຊາບດີ. ຂ້າພະເຈົ້າ "ສມັກ" ໂຕນເປັນຄົນແລກ. ການປີນຂຶ້ນສູ່ຍອດເສົາເປັນຕາຢ້ານຢູ່ແລ້ວ; ເວລາຢືນຢູ່ເທິງແທ່ນນ້ອຍໆຍິ່ງເຮັດໃຫ້ຂາສັ່ນ. ແຕ່ເວລາໜ້າຢ້ານທີ່ສຸດຍັງບໍ່ມາເຖິງ. ເຖິງແມ່ນຂ້າພະເຈົ້າຈະໃສ່ສາຍທັດກໍຕາມ, ຄວາມຢ້ານຫຸ້ມທັດຂ້າພະເຈົ້າຂນະທີ່ຂ້າພະເຈົ້າແນມເບິ່ງຮາວຢູ່ຫ່າງອອກໄປຫົກຟຸດ. ຝູງຊາວໜຸ່ມກຳລັງຈ້ອງຕາເບິ່ງຂ້າພະເຈົ້າ. ຂ້າພະເຈົ້ານັບນຶ່ງເຖິງສາມແລ້ວກະໂດດທັນທີ. ຂ້າພະເຈົ້າຈັບຮາວໄດ້!

ສິ່ງທີ່ສະກິດໃຈຢ່າງນຶ່ງຄືຄວາມຢ້ານບໍ່ໄດ້ອອກໄປ. ຂ້າພະເຈົ້າກະໂດດທັ້ງໆທີ່ມີມັນຢູ່. ນັ້ນແມ່ນຄວາມກ້າຫານຄື: ການກະໂດດທ່າມກາງຄວາມຢ້ານກົວ. ສາວົກຂອງພຣະເຢຊູໃນ ມັດທາຍ 14 ໃຫ້ໂອກາດສະແດງອອກເຖິງຄວາມກ້າຫານນັ້ນ-ພວກເຮົາກໍຄວນສະແດງຄວາມກ້າຫານຂອງເຮົາຄືກັນ. ຂໍກຸນແຈແມ່ນປັກຕາຂອງເຮົາໃສ່ພຣະເຢຊູ, ວາງໃຈວ່າພຣະອົງຈະເຮັດໃນສິ່ງທີ່ພຣະອົງສາມາດເຮັດໄດ້ເທົ່ານັ້ນ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### <u>1. ມັດທາຍ 14:22-26.</u>

*22 ຫຼັງຈາກນັ້ນພຣະອົງຊົງສັ່ງໃຫ້ພວກສາວົກລົງເຮືອຂ້າມຟາກໄປກ່ອນ ຂນະທີ່ພຣະອົງຊົງສັ່ງໃຫ້ປະຊາຊົນເລີກໄປ. 23 ແລະ ເມື່ອຊົງ*
*ໃຫ້ປະຊາຊົນເຫຼົ່ານັ້ນເລີກໄປໝົດແລ້ວ ພຣະອົງຈຶ່ງສະເດັດຂຶ້ນພູຢູ່ຕ່າງຫາກເພື່ອໄຫວ້ວອນ ແລະ ເມື່ອຄໍ່າມາແລ້ວ ພຣະອົງກໍຍັງຊົງຢູ່*
*ທີ່ນັ້ນແຕ່ຕົນດຽວ. 24 ສ່ວນເຮືອນັ້ນກໍຢູ່ໄກຈາກຝັ່ງຫຼາຍຮ້ອຍວາແລະຖືກຟອງນໍ້າຕີໄປມາເພາະທວນລົມຕ້ານຢູ່. 25 ຄັນເຖິງຍາມສີ່ກາງ*
*ຄືນພຣະອົງຊົງຍ່າງເທິງນໍ້າໄປຫາພວກສາວົກ. 26 ແຕ່ເມື່ອພວກສາວົກໄດ້ເຫັນພຣະອົງຊົງຍ່າງມາເທິງນໍ້າ ເຂົາກໍຕົກໃຈເວົ້າກັນວ່າ,*
*"ຜີ" ເຂົາຈຶ່ງຮ້ອງຂຶ້ນເພາະຄວາມຢ້ານ ໃນທັນໃດນັ້ນພຣະເຢຊູໄດ້ຊົງອອກພຣະໂອດກ່າວກັບເຂົາວ່າ. 27 "ຢ່ານ້ອຍໃຈເທາະ ແມ່ນເຮົາ*
*ເອງ ຢ່າຢ້ານ."*

ມັດທາຍ 14 ບັນທຶກວິບາທີສຳຄັນບາງຢ່າງໃນການຮັບໃຊ້ຂອງພຣະເຢຊູ. ຊຶ່ງເລີ້ມຈາກການຕັດຫົວຂອງທ່ານໂຢຮັນບັບຕິສໂຕ, ຜູ້ຊຶ່ງໄດ້ຈັດຕຽມທົນທາງສຳລັບພຣະເຢຊູ. ແນ່ນອນພຣະເຢຊູຕ້ອງຮູ້ຈັກທ່ານໂຢຮັນຕັ້ງແຕ່ຍັງນ້ອຍເພາະແມ່ຂອງພວກເພິ່ນເປັນພີ່ນ້ອງກັນ (ລູກາ 1:36), ດັ່ງນັ້ນ ແມ້ກະທັ້ງຂນະທີ່ພຣະອົງສະແດງຄວາມເສົ້າສລົດໃຈນຳການເສັຽຊີວິດຂອງລາຊະໂລ (ໂຢຮັນ 11:35), ພຣະ

ອົງກໍໄດ້ຮັບການສະເທືອນໃຈຈາກການຕາຍຂອງໂຢຮັນຄືກັນ. "ເວລາພຣະເຢຊູໄດ້ຍິນກ່ຽວກັບເລື່ອງນັ້ນ, ພຣະອົງໄດ້ອອກຈາກທີ່ນັ້ນດ້ວຍທາງເຮືອໄປຢູ່ບ່ອນໂດດດ່ຽວຜູ້ດຽວຕາມລຳພັງ" (ມັດທາຍ 14:13). ຫຼັງຈາກຂ່າວນີ້, ພຣະເຢຊູຢາກໃຊ້ເວລາຢູ່ກັບພຣະບິດາຂອງພຣະອົງພຽງຜູ້ດຽວ.

*ເມື່ອໃດທີ່ທ່ານເວົ້າວ່າ "ໂດຍ" ກັບພຣະເຈົ້າ, ໂດຍບໍ່ຮູ້ວ່າຈະມີຫຍັງເກີດຂຶ້ນຕໍ່ໄປ?*

ຢ່າງໜ້າເສັຽດາຍ, ຄວາມອຶດຫິວຂອງຝູງຊົນສຳລັບພຣະເຢຊູກໍໄດ້ຕິດຕາມພຣະອົງ. ໃນມາຣະໂກກໍໄດ້ຢ້ຳເຫດການນີ້, ທ່ານໄດ້ຂຽນວ່າພຣະເຢຊູ "ກໍຊົງເຫັນປະຊາຊົນໝູ່ໃຫຍ່ ແລະຊົງສົງສານເຂົາ ເພາະວ່າເຂົາເປັນເໝືອນຝູງແກະບໍ່ມີຜູ້ລ້ຽງ ພຣະອົງຈຶ່ງຊົງຕັ້ງຕົ້ນສັ່ງສອນເຂົາເປັນຫຼາຍຂໍ້ຫຼາຍປະການ." (ມາຣະໂກ 6:34). ແລະເວລາສັ່ງສອນຄັ້ງນີ້ເປັນເຫດໃຫ້ພຣະເຢຊູຕ້ອງໄດ້ລ້ຽງຝູງຊົນດ້ວຍເຂົ້າຈີ່ຫ້າກ້ອນ ແລະປານ້ອຍສອງໂຕ (ມັດທາຍ 14:15-21).

ແລ້ວພຣະເຢຊູຍັງບໍ່ມີເວລາຢູ່ກັບພຣະບິດາຂອງພຣະອົງພຽງພໍກັບຄວາມຕ້ອງການເທື່ອ. ດັ່ງນັ້ນ, ເມື່ອຊົງຮັບປະທານອາຫານເສັດແລ້ວ, ພຣະອົງຊົງສັ່ງໃຫ້ສາວົກຂ້າມຟາກໄປກ່ອນ, ໄດ້ອຳລາຝູງຊົນ, ແລະໄດ້ສະເດັດຂຶ້ນພູຢູ່ຕ່າງຫາກເພື່ອໄຫວ້ວອນ." ຖ້າພຣະເຢຊູຕ້ອງການຢູ່ກັບພຣະບິດາໂດຍລຳພັງ, ແລ້ວພວກເຮົາກໍຍິ່ງຕ້ອງການຫຼາຍກວ່ານັ້ນເທົ່າໃດ! ເວລາເຫຼົ່ານັ້ນກັບພຣະເຈົ້າມັນໃຫ້ພະລັງພວກເຮົາ, ແລະໄດ້ຮັບສິ່ງທີ່ເຮົາຕ້ອງການຈາກພຣະວິນຍານເພື່ອເຄື່ອນຍ້າຍໄປຂ້າງໜ້າ.

ຂນະພຣະເຢຊູກຳລັງອະທິຖານຢູ່, ເຮືອທີ່ພຣະອົງບອກໃຫ້ສາວົກອອກກ່ອນນັ້ນຖືກຟອງນ້ຳແລະລົມຕີ. ສິ່ງທີ່ໜ້າສົນໃຈຢ່າງນຶ່ງແມ່ນພຣະເຢຊູໄດ້ບອກໃຫ້ສາວົກຂຶ້ນເຮືອຂ້າມໄປຟາກນ້ຳເບື້ອງນັ້ນ, ເຖິງແມ່ນພຣະອົງຮູ້ວ່າພາຍຸປັ່ນປ່ວນກຳລັງເຄື່ອນມາກໍຕາມ. ນີ້ເປັນສິ່ງຢ້ຳເຕືອນພວກເຮົາວ່າ: ນ້ຳພຣະທັຍແລະການຊີ້ນຳຂອງພຣະເຈົ້າອາດນຳເຮົາເຂົ້າໄປໃນພາຍຸກໍເປັນໄດ້. ບົດຮຽນບາງຢ່າງສາມາດຮຽນຮູ້ໃນທ່າມກາງມໍຣະສຸມເທົ່ານັ້ນ. ດັ່ງພວກເຮົາຈະໄດ້ເຫັນ, ນີ້ເປັນໄລຍະການສ້າງຄວາມເຊື່ອຂອງສາວົກໃຫ້ເຂັ້ມແຂງ.

ເຊົ້າຂອງວັນນັ້ນ ພຣະເຢຊູໄດ້ສຳແດງຣິດອຳນາດຂອງພຣະອົງ ໂດຍການລ້ຽງຫຼາຍພັນຄົນດ້ວຍອາຫານພຽງເລັກໜ້ອຍ, ແລະເວລານີ້ພຣະອົງກຳລັງສຳແດງຣິດອຳນາດຂອງພຣະອົງອີກ- ແລະ ພຣະອົງໄດ້ກະທຳໃນສິ່ງທີ່ສາວົກບໍ່ຄາດຄິດມາກ່ອນ. ຄວາມຈິງແລ້ວ, ມັນຈະເຮັດໃຫ້ເຂົາຢ້ານ. ພວກເຂົາເຈົ້າບໍ່ເຄີຍເຫັນພຣະເຢຊູຍ່າງເທິງໜ້ານ້ຳມາກ່ອນ- ໃຜຊິຄິດວ່າແມ່ນພຣະເຢຊູ? ເຂົານຶກວ່າແມ່ນຜີ.

ເຂົາກໍມີອາການທັມມະດາຄືກັບເຮົາທຸກຄົນຄື: ພວກເຮົາຢ້ານສິ່ງທີ່ເຮົາບໍ່ເຂົ້າໃຈ. ເວລາຂ້າພະເຈົ້າປະເຊີນສິ່ງໃດສິ່ງນຶ່ງນອກເໜືອຄວາມເປັນຈິງທີ່ເຄີຍພົບມາ, ຂ້າພະເຈົ້າກໍມັກຈະໂນ້ມອຽງໄປທາງຄວາມຢ້ານ, ບໍ່ໄດ້ຄິດໄປໃນທາງຄວາມເຊື່ອ. ເຖິງແມ່ນວ່າພຣະເຢຊູໄດ້ສະແດງໃຫ້ຂ້າພະເຈົ້າເຫັນວ່າພຣະອົງເປັນຢູ່ກ່ອນທຸກສິ່ງ ຂ້າພະເຈົ້າຍັງອ່ອນແອຕໍ່ສິ່ງພົບເຫັນຢ່າງປລາດໃຈ. ຄືກັນກັບພວກສາວົກ, ຂ້າພະເຈົ້າອາດກະໂດດເຂົ້າສູ່ການສລຸບທີ່ຜິດແທນທີ່ຈະກະໂດດສູ່ອ້ອມແຂນຂອງຜູ້ຊຶ່ງເຮົາຈະໄດ້ຮັບການຊ່ອຍເຫຼືອ.

## 2. ມັດທາຍ 14:27-30.

*[27] "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຢ້ານ." [28] ຝ່າຍເປໂຕຈຶ່ງທູນຕອບພຣະອົງວ່າ, "ນາຍເອີຍ, ຖ້າແມ່ນທ່ານແນ່ແລ້ວ ຂໍສັ່ງໃຫ້ຂ້ານ້ອຍຍ່າງເທິງນ້ຳໄປຫາທ່ານ." [29] ພຣະອົງຊົງບອກວ່າ, "ມາສາ" ເປໂຕຈຶ່ງອອກຈາກເຮືອຍ່າງເທິງນ້ຳໄປຫາພຣະເຢຊູ. [30] ແຕ່ເມື່ອເຫັນລົມກໍຢ້ານແລະເມື່ອກຳລັງຈະຈົມກໍຮ້ອງວ່າ, "ນາຍເອີຍ, ຊ່ອຍຂ້ານ້ອຍໃຫ້ພົ້ນແດ່ທ້ອນ."*

ບາງທີການຮູ້ສຶກຕໍ່ຄວາມຢ້ານຂອງເຂົາເຈົ້າ, ພຣະເຢຊູບໍ່ໄດ້ລໍຊ້າຮີບສນອງຕອບພວກສາວົກທັນທີ. "ຢ່ານ້ອຍໃຈເທາະ ແມ່ນເຮົາເອງ ຢ່າຢ້ານ." ພຣະເຢຊູເຮັດຫຼາຍກວ່າທີ່ບອກເຂົາເຈົ້າວ່າພຣະອົງແມ່ນອາຈານຂອງເຂົາເຈົ້າ. ຄືກັບສອງຄຳໃນພາສາກຣີກແປວ່າ "ແມ່ນເຮົາ" ໄດ້ຖືກນຳໃຊ້ຢູ່ບ່ອນອື່ນຕອນພຣະອົງບອກວ່າ "ແມ່ນເຮົາ" (ໂຢຮັນ 8:58), ນີ້ແມ່ນການອ້າງເຖິງພຣະເຈົ້າຢາເວຢ່າງຊັດເຈນ, ຊຶ່ງເປັນນາມຊື່ຕາມພັນທະສັນຍາສຳລັບພຣະເຈົ້າ. ພຣະເຢຊູກຳລັງສເນີຕົວພຣະອົງເອງທຽບກັບພຣະເຈົ້າ. ໃນຊ່ວງເວລາພຣະອົງຢູ່ກັບສາວົກທີ່ຢ້ານກົວຕົວສັ່ນ, ພຣະເຢຊູໄດ້ປອບໃຈເຂົາເຈົ້າວ່າພຣະອົງແມ່ນພຣະເຢຊູ, ຜູ້ທີ່ເຂົາຮູ້ຈັກແລະຕິດຕາມ, ແລະພຣະອົງແມ່ນ

ພຣະເຈົ້າ, ເປັນເຈົ້າເໜືອທັມມະຊາດ.

ຍ້ອນວ່າພຣະເຢຊູເປັນໃຜ, ເປໂຕຈຳຕ້ອງວາງໃຈເຊື່ອພຣະອົງ. ແຕ່ວ່າເປໂຕຢາກໃຫ້ແນ່ໃຈວ່າແມ່ນພຣະເຢຊູແທ້, ສະນັ້ນເພິ່ນຈຶ່ງເຮັດບາງສິ່ງຢ່າງກ້າຫານ. "ຖ້າແມ່ນທ່ານແນ່ແລ້ວຂໍສັ່ງໃຫ້ຂ້ານ້ອຍຍ່າງເທິງນ້ຳໄປຫາທ່ານ" ເປໂຕຮ້ອງຕອບ, (ຂໍ້ 28). ຖ້າຫາກແມ່ນພຣະເຢຊູກຳລັງຍ່າງຢູ່ເທິງນ້ຳ, ຈາກນັ້ນພຣະເຢຊູກໍຈະສາມາດກ່າວຄຳສັ່ງແລະຖ່າຍທອດຄວາມສາມາດນັ້ນສູ່ຄົນອື່ນໆໄດ້ອີກ.

ພຣະເຢຊູໄດ້ຮ້ອງບອກ, ເປໂຕຈຶ່ງອອກຈາກເຮືອ, ແລະເພິ່ນກໍຍ່າງເທິງນ້ຳໄດ້ຄືກັນກັບພຣະເຢຊູ. ເປໂຕເປັນທີ່ຮູ້ຈັກກັນດີວ່າມີທັມມະຊາດຫຸນຫັນພະລັນດ່ວນ, ດັ່ງນັ້ນບາງທີລາວອາດກະໂດດອອກເຮືອທັນທີທີ່ພຣະເຢຊູເວົ້າວ່າ "ມາສາ", ເປໂຕບໍ່ໄດ້ຄິດ; ລາວກະທຳຕາມທັນທີ. ໃນຂນະນັ້ນເປໂຕບໍ່ໄດ້ໃຫ້ຄວາມຢ້ານຄວບຄຸມລາວ, ລາວປ່ອຍໃຫ້ພຣະເຢຊູນຳພາການກະທຳຂອງລາວ. ພຣະເຢຊູໄດ້ເອີ້ນ-ແລະເປໂຕກໍໄດ້ຕອບ.

ເປໂຕຍ່າງເທິງນ້ຳໄດ້ສຳເຣັດເພາະລາວເຊື່ອຟັງແລະປັກຕາເບິ່ງພຣະເຢຊູ. ແຕ່ວ່າເມື່ອເປໂຕວ່າຍສາຍຕາອອກຈາກພຣະເຢຊູແລະແນມເບິ່ງສິ່ງອ້ອມຮອບເພິ່ນ, ໂດຍສະເພາະເມື່ອເຫັນ "ຄວາມແຮງຂອງລົມ", ຄວາມຢ້ານຂອງເພິ່ນກໍກັບມາ. ເປໂຕຈື່ຈຳສະຖານະການຂອງເພິ່ນດີ, ແລະໃນຂນະນັ້ນ, ເພິ່ນໄດ້ລືມໄປວ່າໃຜໄດ້ເອີ້ນແລະໃຫ້ອຳນາດເພິ່ນຍ່າງເທິງນ້ຳ.

*ມີພາຍຸແລະຄື້ນໃດແດ່ທີ່ເປັນເຫດໃຫ້ເຮົາຍ້າຍສາຍຕາອອກຈາກພຣະເຢຊູ?*

ກ່ອນເຮົາຈະດູຖູກວ່າທ່ານເປໂຕຂາດຄວາມເຊື່ອ, ຂໍໃຫ້ເຮົາສັງເກດສອງຢ່າງ. ນຶ່ງ, ເປໂຕຕົກໃຈພຽງຊົ່ວຄາວ. ທ່ານເປໂຕເຮັດຫຍັງເມື່ອຄວາມເຊື່ອຂອງເພິ່ນອ່ອນແອ? ເພິ່ນຫຼຽວກັບຄືນຫາພຣະເຢຊູ. "ເພິ່ນຮ້ອງວ່າ "*ນາຍເອີຍ, ຊ່ອຍຂ້ານ້ອຍໃຫ້ພົ້ນແດ່ຖ້ອນ!" ສອງ,* ຄວາມເຊື່ອຂອງທ່ານເປໂຕອາດອ່ອນແອ, ແຕ່ເພິ່ນມີຄວາມເຊື່ອໃນພຣະເຢຊູພຽງພໍຈຶ່ງສາມາດກະໂດດອອກຈາກເຮືອໄດ້. ພວກເຮົາສາມາດຮຽນຮູ້ບົດຮຽນສຳຄັນຈາກທ່ານເປໂຕໃນໂອກາດນີ້ຄື: **ຈົ່ງປັກຕາຂອງທ່ານໃສ່ພຣະເຢຊູ.**

## 3. ມັດທາຍ 14:31-33.

*31 ໃນທັນໃດນັ້ນພຣະເຢຊູຊົງຢື້ພຣະຫັດຈັບເປໂຕໄວ້ແລ້ວຊົງກ່າວວ່າ, "ໂອ ຜູ້ມີຄວາມເຊື່ອນ້ອຍ ເປັນຫຍັງຈຶ່ງສົງສັຍ." 32 ເມື່ອພຣະອົງ*
*ກັບເປໂຕຂຶ້ນເຮືອແລ້ວລົມກໍງຽບລົງ. 33 ພວກທີ່ຢູ່ໃນເຮືອໄດ້ມາກົ້ມຂາບໃສ່ພຣະອົງແລ້ວທູນວ່າ, "ທ່ານເປັນພຣະບຸດຂອງພຣະເຈົ້າຈິງ*
*ແທ້."*

ນີ້ເປັນຄັ້ງທີສອງໃນເຫດການນີ້ທີ່ພວກເຮົາເຫັນຄຳວ່າ "ໃນທັນໃດນັ້ນ". ພຣະເຢຊູບໍ່ໄດ້ເສັຽເວລາໃນການລະງັບຄວາມຢ້ານແລະການກູ້ພັຍພວກທີ່ຕ້ອງການຄວາມຊ່ອຍເຫຼືອ. ພຣະເຢຊູບໍ່ໄດ້ເວົ້າຮຸນແຮງກັບເປໂຕກ່ອນພຣະອົງຈະຊ່ອຍເພິ່ນ. ພຣະເຢຊູບໍ່ໄດ້ໃຫ້ເປໂຕຮູ້ເມື່ອຊ້ຳວ່າຄວາມເຊື່ອຂອງເພິ່ນໄດ້ຫຼຸດລົງກ່ອນພຣະອົງຍື່ນມືຊ່ອຍ. ພຣະເຢຊູຮີບກ້າວເຂົ້າທັນທີແລະຈັບເປໂຕໄວ້ເມື່ອເພິ່ນຮ້ອງຂໍ.

ອັນນີ້ຄວນຈະນຳພວກເຮົາໃຫ້ເຕັມໃຈຄວ້າເອົາຄວາມເຊື່ອ; ເຖິງແມ່ນວ່າເຮົາເລີ້ມຈົມລົງກໍຕາມ. ພຣະເຢຊູຢູ່ທີ່ນັ້ນເພື່ອຊ່ອຍແລະຍົກຊູເຮົາຂຶ້ນ. ໃນເບື້ອງຕົ້ນທ່ານເປໂຕມີຄວາມເຊື່ອ ແລະວາງໃຈພຣະເຢຊູຈຶ່ງອອກຈາກເຮືອ, ແຕ່ພຣະເຢຊູໄດ້ຊີ້ບອກວ່າຄວາມເຊື່ອຂອງເພິ່ນມີ "ໜ້ອຍ." ບໍ່ແມ່ນວ່າເປໂຕຂາດຄວາມເຊື່ອ; ພຽງແຕ່ເພິ່ນມີຄວາມເຊື່ອໜ້ອຍ.

ສິ່ງພຣະເຢຊູເວົ້າຕໍ່ເປໂຕນັ້ນເປັນພຽງການຕິຕຽນທີ່ອ່ອນໂຍນ, ຮ້ອງຂໍໃຫ້ເພິ່ນພິຈາຣະນາວ່າເປັນຫຍັງຈຶ່ງສົງສັຍ. ພຣະເຢຊູຖາມເພາະວ່າພຣະອົງຢາກໃຫ້ເປໂຕຮູ້ເມື່ອ ແລະລະນຶກເຖິງຫຼັກຖານທີ່ຢູ່ຕໍ່ໜ້າເພິ່ນ. ທ່ານເປໂຕມີຄວາມເຊື່ອພຽງພໍທີ່ເຮັດຕາມຄຳສັ່ງພຣະເຢຊູໃຫ້ມາຫາ; ເພິ່ນຍ່າງໄປດ້ວຍສາຍຕາຈ້ອງທີ່ພຣະເຢຊູ, ແລະບໍ່ມີເຫດຜົນທີ່ຈະສົງສັຍເລີຍວ່າແມ່ນແຕ່ຂນະທີ່ເພິ່ນແນມອ້ອມຮອບເບິ່ງລົມແລະຄື້ນ.

*ທ່ານໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພຣະເຢຊູຜ່ານພາຍຸຄັ້ງນີ້?*

ການອັສຈັນຄັ້ງທີສອງຈອນຈະເກີດຂຶ້ນໃນທະເລຄີ: "ເມື່ອພຣະອົງກັບເປໂຕຂຶ້ນເຮືອແລ້ວ, ລົມກໍງຽບລົງ." ນີ້ບໍ່ມີການລົ້ມຕາຍເມື່ອພາຍຸໄດ້ພັດຜ່ານໄປ. ພາຍຸໄດ້ສິ້ນສຸດ. ນີ້ເປັນການແຈ່ມແຈ້ງສອງເທົ່າຍ້ອນການຕອບສນອງຂອງພວກສາວົກ. ເຂົາເຈົ້າພາກັນກົ້ມຂາບແລະຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ.

ພວກສາວົກລະນຶກໄດ້ວ່າພຣະເຢຊູຍິ່ງໃຫຍ່ກວ່າຄວາມຢ້ານທຸກຢ່າງຂອງເຂົາເຈົ້າ, ແລະມັນໄດ້ພາໃຫ້ເຂົາເຈົ້ານະມັສການພຣະອົງ. ການນະມັສການຂອງທ່ານເປໂຕແນ່ນອນວ່າລວມທັງການຂອບພຣະຄຸນຂອງເພິ່ນສໍາລັບການໄດ້ຮັບການກູ້ພົ້ນເທິງໜ້ານໍ້າ. ພວກສາວົກນະມັສການພຣະເຢຊູເພາະພຣະອົງຢູ່ທ່າມກາງພວກເຂົາ. ພວກເຂົາເຈົ້ານະມັສການພຣະອົງເພາະພຣະອົງຍິ່ງໃຫຍ່ກວ່າອຸປສັກທີ່ຢູ່ຕໍ່ໜ້າເຂົາເຈົ້າ, ແລະເຂົາລະນຶກໄດ້ວ່າຄວາມຢ້ານບໍ່ສາມາດຄອບຄອງເຂົາໃນເວລາພຣະເຢຊູປີນຢູ່. ມັນບໍ່ມີຄວາມແຕກຕ່າງຫັງສໍາລັບເຮົາ. ພວກເຮົາບໍ່ສາມາດຊ່ອຍຫຍັງ ແຕ່ນະມັສການພຣະເຢຊູ ເມື່ອເຮົາເຫັນພຣະອົງເປັນພຣະເຈົ້າອົງທ່ຽງແທ້. ພວກເຮົາສາມາດຢືນສູ້ໂດຍປາສຈາກຄວາມຢ້ານເພາະພຣະອົງຢູ່ກັບເຮົາ, ແລະພຣະອົງຍິ່ງໃຫຍ່ກວ່າທຸກສິ່ງ.

*ກຸ່ມຂອງທ່ານໄດ້ຊ່ອຍຊຶ່ງກັນແລະກັນໃຫ້ມີຄວາມກ້າຫານໃນບ່ອນທີ່ມີຄວາມຢ້ານຢ່າງໃດ?*

## ນໍາໃຊ້ໃນຊີວິດ

ພວກເຮົາໄດ້ຮັບການຊູໃຈໃຫ້ຕາມພຣະເຢຊູຢ່າງກ້າຫານ, ແມ້ແຕ່ໃນສະຖານະການທີ່ໜ້າຢ້ານຕ່າງໆກໍຕາມ? ຈົ່ງເລືອກເອົາຂໍ້ນຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ຈົ່ງອະທິຖານ.** ຈົ່ງບົ່ງບອກສິ່ງທີ່ອາດເຮັດໃຫ້ທ່ານກົວຫຼືຢ້ານກ່ຽວກັບການຕິດຕາມພຣະເຢຊູໃນຄວາມເຊື່ອ. ຈົ່ງອ້ອນວອນແລະຂໍຮ້ອງພຣະເຈົ້າໃຫ້ປະທານພະລັງແລະວາງໃຈພຣະອົງ.
- **ຈົ່ງເວົ້າ.** ຕ້ອງເວົ້າກັບຜູ້ໃດຜູ້ນຶ່ງກ່ຽວກັບການໃຫ້ອະພັຍຫຼືຊຸກຍູ້ໃຫ້ກັບໃຈແລະກັບມາຫາພຣະຄຣິດ. ຈົ່ງບົ່ງບອກຜູ້ໃດຜູ້ນຶ່ງທີ່ທ່ານຕ້ອງການເວົ້ານໍາ, ຈົ່ງອະທິຖານໃຫ້ມີໂອກາດ, ແລະກ້າວາງໃຈໃຫ້ພຣະເຈົ້ານໍາພາທ່ານໃນການສົນທະນາ.
- **ຈົ່ງໄປ.** ນຶ່ງໃນບາດກ້າວທີ່ໜ້າຢ້ານທີ່ຂ້າພະເຈົ້າໄດ້ພົບມາແມ່ນໃຫ້ກ້າວອອກຈາກເຂດຄວາມສະດວກສະບາຍແລະອອກເດີນທາງໄປປະກາດ(go on a mission trip). ຈົ່ງລົມກັບຜູ້ນໍາໃນໂບດຂອງທ່ານເພື່ອຫາໂອກາດອອກໄປແລະຮັບໃຊ້ພຣະຄຣິດຢ່າງກ້າຫານໃນອາທິດນີ້.

ມີຫຼາຍສິ່ງສາມາດເຮັດໃຫ້ເຮົາຢ້ານໃນຊີວິດ, ຈາກເບົາບາງ ສູ່ສາຫັດ. ແຕ່ພວກເຮົາສາມາດມີຄວາມກ້າຫານເພາະ, ໃນພຣະເຢຊູ, ພວກເຮົາສາມາດເອົາຊນະອຸປສັກທຸກຢ່າງທີ່ອາດມາໃນທາງຂອງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**